

# ເອກະລັກຂອງຊົນເຜົ່າ

# ລາຫູ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe'de'ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ລາຫູ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າລາຫູ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ລາຫູ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ, ບາງຮີດ ແລະ ປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ລາຫູ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ

ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກ ຢາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ລາຫູ ດຳລົງຊີວິດ ແລະ ຕັ້ງພູມລຳເນົາຢູ່ບັນດາແຂວງ ພາກເໜືອ ຂອງລາວເຮົາເຊັ່ນ: ແຂວງ ຫຼວງນ້ຳທາ ແລະ  ບໍ່ແກ້ວ. ນອກຈາກນີ້, ຊົນເຜົ່າ ລາຫູ ຍັງມີຢູ່ພາກໃຕ້ຂອງປະເທດ ຈີນ, ມຽນມາ, ຫວຽດນາມ ແລະ ພາກເໜືອຂອງລາຊະອານາຈັກ ໄທ. ຊົນເຜົ່າ ລາຫູ ຢູ່ລາວ ມີປະຊາກອນ ທັງໝົດ 15.238 ຄົນ, ຍິງ 7.619 ຄົນ, ເທົ່າກັບ 0,3% ຂອງ ພົນລະເມືອງ ທົ່ວປະເທດ.




● ຊົນເຜົ່າ ລາຫູ ທີ່ແຈກຢາຍຢູ່ແຕ່ລະບ່ອນ

- ແຂວງ ຫຼວງນ້ຳທາ: ເມືອງ ຫຼວງນ້ຳທາ, ເມືອງ ວຽງພູຄາ, ເມືອງ ລອງ
- ແຂວງ ບໍ່ແກ້ວ: ເມືອງ ຫ້ວຍຊາຍ, ເມືອງ ຕົ້ນເຜີ້ງ,ເມືອງ ເມິງ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າ ລາຫູ ມີຖິ່ນຖານພູມລຳເນົາເດີມຢູ່ທິດຕາເວັນອອກສ່ຽງໃຕ້ຂອງປະເທດ ຈີນ ໄດ້ອົບພະຍົບລົງມາທາງພາກໃຕ້ ແລະ ຕັ້ງພູມລຳເນົາຢູ່ບໍລິເວນເຂດແດນ ມຽນມາ-ຈີນ ທາງທິດຕາເວັນຕົກຂອງເມືອງ ວ້າ ແລະ ທິດຕາເວັນອອກຂອງ ຢູນານ. ຕໍ່ມາຮອດຕົ້ນສະຕະວັດທີ XIX ເຂົາເຈົ້າໄດ້ມາຕັ້ງບ້ານເຮືອນຢູ່ເຂດ ກວາງຕຸງ ຂອງປະເທດມຽນມາ ແລະ ທ້າຍສະຕະວັດທີ XIX ຊົນເຜົ່ານີ້ໄດ້ເຄື່ອນຍ້າຍລົງມາທາງຕອນໃຕ້, ໃນຂະນະດຽວກັນນີ້ກໍມີການແຍກກັນຕັ້ງຖິ່ນຖານຢູ່ລາຊະອານາຈັກໄທ, ປະເທດຫວຽດນາມ ແລະ ຈຳນວນໜຶ່ງກໍເຂົ້າມາຢູ່ບັນດາແຂວງພາກເໜືອຂອງລາວເຮົາ.

ຊົນເຜົ່ານີ້ເອີ້ນ ຕົນເອງວ່າ: “ລາຫູ”, ຊື່ທີ່ເຂົາເຈົ້າມັກກໍແມ່ນ “ລາຫູ”. ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ: “ມູເຊີ”. ຄຳວ່າ “ມູເຊີ” ມີຄວາມໝາຍແນວໃດນັ້ນຍັງບໍ່ທັນຮູ້ຊັດເຈນ. ຄຳທີ່ວ່າ: “ລາຫູ” ມາຈາກຄຳວ່າ: “ລ້າຮູ” ໃນຄວາມໝາຍຂອງຊົນເຜົ່ານີ້ ແປວ່າ: “ລ້ຽງເສືອ”, “ລ້າ”ແປວ່າເສືອ ແລະ “ຮູ” ແປວ່າ: “ລ້ຽງ” ຄວາມໝາຍທີ່ ແທ້ຈິງກໍຄື ຜູ້ລ້ຽງເສືອນັ້ນເອງ.



ພາບໂດຍ: ອົງການ NCA

ຊົນເຜົ່າ ລາຫູ ປະກອບດ້ວຍຫຼາຍແຂງເຊັ່ນ: ລາຫູນະ (ມູເຊີຂາວ), ລາຫູຊີ (ມູເຊີດຳ) ແລະ ລາຫູເຊ (ມູເຊີແດງ ຫຼື ກຸ່ຍ).

# ອາຊີບຂອງຊົນເຜົ່າ ລາຫູ

ການດຳເນີນວິຖີຊີວິດທາງດ້ານເສດຖະກິດ ໃນເມື່ອກ່ອນຊົນເຜົ່າ ລາຫູ ມີອາຊີບເຮັດໄຮ່ປູກເຂົ້າ, ແລະ ປູກຢາຝິ່ນ. ເຂົາເຈົ້າມີຄວາມຊຳນານໃນການຖາງປ່າຟັນຕົ້ນໄມ້ເພື່ອເປັນບ່ອນທຳການຜະລິດລ້ຽງຊີວິດປະຈຳວັນ. ຍ້ອນວ່າໃນອະດີດຜ່ານມາເຂົາເຈົ້າຍັງບໍ່ທັນຮູ້ ແລະ ເຂົ້າໃຈວ່າການຕັດໄມ້ທຳລາຍປ່າເປັນການທຳລາຍສະພາບແວດລ້ອມ. ເຂົາເຈົ້າເຂົ້າໃຈວ່າປ່າໄມ້ເປັນຂອງທຳມະຊາດ ແລະ ມີການຈະເລີນເຕີບໂຕຂຶ້ນມາແທນກັບສິ່ງທີ່ຖືກທຳລາຍໄປ. ທັງໆທີ່ວ່າຊີວິດຂອງເຂົາເຈົ້າມີການຜູກພັນກັບປ່າໄມ້ ແລະ ປ່າໄມ້ເປັນແຫຼ່ງອາຫານ, ເປັນສາງທີ່ສະໜອງສິ່ງຕ່າງໆ ໃຫ້ແກ່ການດຳລົງຊີວິດຂອງເຂົາເຈົ້າ. ແຕ່ເຖິງຢ່າງໃດກໍຕາມເມື່ອການເວລາໄດ້ມີການປ່ຽນແປງໄປປະກອບກັບການເພີ່ມຂຶ້ນຂອງຈຳນວນປະຊາກອນ. ຊົນເຜົ່າ ລາຫູ ໄດ້ພະຍາຍາມປັບຕົນເອງ ແລະ ວິຖີການດຳລົງຊີວິດໃຫ້ສອດຄ່ອງເໝາະສົມກັບການເວລາ.

ປັດຈຸບັນມີການເຮັດໄຮ່ແບບໝູນວຽນປະສົມປະສານກັບການເຮັດນາ, ນອກຈາກນີ້ກໍຍັງປູກພືດສຳຮອງອີກຫຼາຍຊະນິດ. ສັດທີ່ເຂົາເຈົ້າມັກລ້ຽງ ແລະ ນິຍົມກັນລ້ຽງໄດ້ແກ່ໄກ່ ແລະ ໝູ ທັງນີ້ກໍຍ້ອນວ່າສັດດັ່ງກ່າວມີຄວາມສຳຄັນໃນການປະກອບເຂົ້າໃນພິທີກຳຕ່າງໆ ທີ່ພົວພັນເຖິງຊີວິດປະຈຳວັນຂອງເຂົາເຈົ້າ. ສ່ວນສັດປະເພດງົວ, ຄວາຍບໍ່ນິຍົມລ້ຽງ. ຄຽງຄູ່ກັນນີ້ຊົນເຜົ່າ ລາຫູ ຍັງມີມູນເຊື້ອໃນການຫຍິບປັກຖັກແສ່ວ, ຈັກສານເຄື່ອງຫັດຖະກຳ ແລະ ຫາເຄື່ອງປ່າຂອງດົງ ເພື່ອຮັບໃຊ້ໃນການດຳລົງຊີວິດ ແລະ ແລກປ່ຽນກັບສິ່ງຂອງທີ່ຈຳເປັນຊຶ່ງບໍ່ສາມາດຜະລິດໄດ້ໃນຊຸມຊົນ.

# ທີ່ຕັ້ງບ້ານ ແລະ ເຮືອນ

ຊົນເຜົ່າ ລາຫູ ມັກຕັ້ງບ້ານເຮືອນຢູ່ບ່ອນທີ່ສູງຕາມສັນພູ ຫຼື ເຈີ້ຍພູມີຄວາມສູງແຕ່ 1.000 ແມັດ ເໜືອລະດັບນ້ຳທະເລຂຶ້ນໄປ. ປັດຈຸບັນຄ່ອຍໆ ຍ້າຍລົງມາຕ່ຳ, ລັກສະນະຂອງເຮືອນຕາມປະເພນີແລ້ວເຂົາເຈົ້າຈະມັກສ້າງແບບເຮືອນຮ້ານ, ແຜນຜັງເຮືອນອາດຈະແຕກຕ່າງກັນໄປຕາມຖານະຄວາມເປັນຢູ່ ແລະ ຈຳນວນສະມາຊິກພາຍໃນຄອບຄົວ. ໂດຍທົ່ວໄປແລ້ວຈະປະກອບດ້ວຍ 2 ຫ້ອງຂຶ້ນໄປຄື: ຈະມີຫ້ອງນອນ, ຫ້ອງຮັບແຂກ ຫຼື ຫ້ອງພັກຜ່ອນ ແລະ ສະຖານທີ່ແຕ່ງກິນ, ການປຸກເຮືອນແມ່ນບໍ່ໄດ້ເລືອກມື້ເລືອກຍາມ, ປຸກເວລາໃດນັ້ນແມ່ນໄດ້ອີງໃສ່ສະພາບຕົວຈິງ.

ເວລາປຸກເຮືອນບໍ່ໃຫ້ຫຼັງຄາເຮືອນຊື່ກັນຍ້ອນເຂົາເຈົ້າເຊື່ອວ່າຖ້າຫຼັງຄາເຮືອນຊື່ກັນຈະເຮັດໃຫ້ຢູ່ບໍ່ສະບາຍ ແລະ ມັກເຈັບເປັນ. ເວລາຂຶ້ນເຮືອນໃໝ່ເຂົາເຈົ້າຈະມີພິທີກຳຄຶກຄື້ນທີ່ສຸດເພາະຊົນເຜົ່ານີ້ມີຄວາມເຊື່ອວ່າຍິ່ງຄຶກຄື້ນ, ຍິ່ງມ່ວນຊື່ນເທົ່າໃດກໍ່ຈະເຮັດໃຫ້ຄອບຄົວອຸດົມສົມບູນຂຶ້ນເທົ່ານັ້ນ, ຈິ່ງໄດ້ມີການຂ້າສັດຕ່າງໆ ເພື່ອໃຫ້ຍາດຕິພີ່ນ້ອງທີ່ມາຊ່ວຍໃນການແປງເຮືອນກິນຕາມຖານະເສດຖະກິດຂອງຄອບຄົວ.



ຖ່າຍພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ

# ເຄື່ອງນຸ່ງຫົ່ມ

ເຂົາເຈົ້າມີການແຕ່ງກາຍ, ມີເຄື່ອງນຸ່ງຫົ່ມທີ່ຖືວ່າເປັນເອກະລັກສະເພາະຂອງຊົນເຜົ່າຕົນ. ຊຶ່ງປະດັບເອ້ຍ້ອງ, ຖັກແສ່ວດ້ວຍສີສັນລວດລາຍຕ່າງໆ ທີ່ສວຍສົດງົດງາມຈາກສີໄມ້ລາຍມືອັນຄ່ອງແຄ້ວຂອງເອື້ອຍນ້ອງແມ່ຍິງ. ສ່ວນຫຼາຍແມ່ນຈະເຫັນໃນເວລາມີເທດສະການຈັດງານບຸນປະຈຳປີ.



ພາບໂດຍ: ກົມຊົນເຜົ່າ


ພາບໂດຍ: ອົງການ NCA

# ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າ ລາຫູ ແມ່ນນິຍົມກິນອາຫານທີ່ລົດຊາດຈາງ ແລະ ອາຫານທີ່ພວກເຂົາເຈົ້າເຮັດກິນໃນແຕ່ລະວັນນັ້ນແມ່ນຈະກິນອາຫານປະເພດ : ແກງໄກ່, ແກງໝູ, ຂົ້ວຜັກ, ແຈ່ວນ້ຳປາ, ລາບຊີ້ນໝູ, ປີ້ງປາ ແລະ ດື່ມນ້ຳດິບ, ເຫຼົ້າ ໃນເວລາມີງານໃນບ້ານ ຫຼື ມີແຂກມາຢ້ຽມຢາມ.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ອົງການ NCA

# ພາສາປາກເວົ້າ

ພາສາຊົນເຜົ່າ ລາຫູ ຈັດເຂົ້າໃນໝວດພາສາຈີນ-ຕີເບດ, ສາຂາຕິເບດ-ມຽນມາ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ, ການປາກເວົ້າແຕ່ລະແຂວງຊົນເຜົ່າຈະມີສຽງສຳນຽງແຕກຕ່າງກັນເລັກນ້ອຍ, ແຕ່ກໍສາມາດສື່ສານກັນໄດ້ບໍ່ວ່າຈະຢູ່ລາວ, ຈີນ, ມຽນມາ, ຫວຽດນາມ ແລະ ລາຊະອານາຈັກໄທ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ລາຫູ

| ລຳດັບ | ພາສາ ລາວ | ພາສາ ລາຫູ |
|---|---|---|
| 01 | ສະບາຍດີ | ຂະແລຍາແມ |
| 02 | ໂຊກດີ | ແຊຈສາແມ |
| 03 | ຂອບໃຈ | ແຊຈຊາຈແມ |
| 04 | ຂໍໂທດ | ປີສິມະແຣະແມ |
| 05 | ເຈົ້າຊື່ຫຍັງ? | ນໍອໍອສຈືອາຫູເລ? |
| 06 | ເຮັດຫຍັງຢູ່? | ອາທຸເປເລ? |
| 07 | ກິນເຂົ້າແລ້ວບໍ? | ອາຈ່ໍາໂປລາ? |
| 08 | ລາກ່ອນ | ກອຍສານິ |
| 09 | ພົບກັນໃໝ່ | ເຕເປະມໍຕະມໍເກາະ |
| 10 | ບໍ່ເປັນຫຍັງ | ປີຊິມະເຣະ |
| 11 | ໄປຫຍັງ | ອາໄຂເລ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ແຂວງ ບໍ່ແກ້ວ*

# ຄວາມເຊື່ອຖື

ຊົນເຜົ່າ ລາຫູ ມີພື້ນຖານຄວາມເຊື່ອຖືໃນເລື່ອງຜີ, ຜີທີ່ມີອຳນາດທີ່ສຸດໄດ້ແກ່ ຜີຟ້າ ແລະ ຍັງເຊື່ອຖືຜີເຮືອນ, ຜີບ້ານ, ຢູ່ແຕ່ລະເຮືອນຈະມີຮ້ານບູຊາຜີ ແລະ ແມ່ນບັນດາຜີດີສຳລັບພວກເຂົາ. ແຕ່ກົງກັນຂ້າມ, ຜີຮ້າຍທີ່ຊົນເຜົ່ານີ້ເກງກົວນັ້ນກໍມີຢູ່ຫຼາຍເຊັ່ນ: ຜີນ້ຳ, ຜີປ່າ, ຜີໄຮ່, ຜີພູເຂົາ ແລະ ອື່ນໆ.

# ງານບຸນ

ໃນຮອບວຽນປີໜຶ່ງໆຂອງ ຊົນເຜົ່າ ລາຫູ ຈະມີການຈັດງານບຸນປະເພນີ ແລະ ພິທີກຳຕ່າງໆ. ພິທີອັນສຳຄັນຂອງເຂົາເຈົ້າແມ່ນເທດສະການປີໃໝ່ຊຶ່ງຈະຈັດຂຶ້ນໃນລະຫວ່າງເດືອນມັງກອນຫາເດືອນກຸມພາ. ຄຽງຄູ່ກັນນັ້ນ, ເຂົາເຈົ້າກໍຍັງມີພິທີກຳທີ່ພົວພັນເຖິງລະດູການຜະລິດໃນການຂໍພອນສິ່ງສັກສິດເພື່ອເຮັດໃຫ້ຜົນລະປູກຈະເລີນງອກງາມມີຄວາມອຸດົມສົມບູນຕະຫຼອດປີ.

# ສິລະປະວັນນະຄະດີ

ຊົນເຜົ່າ ລາຫູ ຈະມີເຄື່ອງດົນຕີພື້ນເມືອງປະຈຳເຜົ່າຂອງຕົນເອງແມ່ນ: ແຊ່ງ, ກອງ, ປີ່ ແລະ ກໍມີບົດກອນລຳ, ກອນຂັບ, ກອນຜະຫຍາ ແລະ ອື່ນໆ. ສິ່ງທີ່ກ່າວມານັ້ນແມ່ນເຂົາເຈົ້າຈະຮ້ອງ, ເສບໃນເວລາທີ່ມີງານບຸນປະຈຳຊົນເຜົ່າ, ງານແຕ່ງດອງ ແລະ ອື່ນໆ.



ພາບໂດຍ: ອິນເຕີເນັດ